## II. <u>ສະພາບການຊື້-ຂາຍຮຸ້ນ ປະຈຳວັນທີ 02 -08 ທັນວາ 2016</u>

### 1. <u>ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບຕ່າງປະເທດ</u>

ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ ທຽບໃສ່ອາທິດທີ່ຜ່ານມາ ມີລາຍລະອຽດ ດັ່ງລຸ່ມນີ້:

**ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ** ດັດຊະນີ S&P500 ປັບຕົວເພີ່ມຂຶ້ນ 4,53%, Dow Jones 7,40% ແລະ NASDAQ 2,81%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນ ສ.ອາເມລິກາ ປັບຕົວເພີ່ມຂຶ້ນແມ່ນມາຈາກ ກະຊວງແຮງງານ ສ. ອາເມລິກາ ໄດ້ອອກລາຍງານ ຕົວເລກການຈ້າງງານນອກພາກກະສິກຳທີ່ເພີ່ມຂຶ້ນ 178.000 ຕຳແໜ່ງໃນເດືອນ ພະຈິກ ແລະ ອັດຕາການວ່າງງານກໍ່ປັບຕົວຫຼຸດລົງມາຢູ່ທີ່ລະດັບ 4,6% ເຊິ່ງເປັນລະດັບຕ່ຳສຸດນັບຕັ້ງແຕ່ເດືອນ ສິງຫາ ປີ 2007 ຫຼື ຕ່ຳສຸດໃນຮອບ 9 ປີ ໂດຍກະຊວງແຮງງານ ສ.ອາເມລິກາ ຍັງແຈ້ງຕົວເລກເພີ່ມເຕີມວ່າ ພາກເອກະຊົນມີການຈ້າງງານເພີ່ມຂຶ້ນອີກ 156.000 ຕຳ ແ ໜ່ງ ແລະ ພາກລັດກໍ່ເພີ່ມຂຶ້ນອີກ 22.000 ຕຳແໜ່ງເຊິ່ງສະທ້ອນໃຫ້ເຫັນເຖິງຄວາມເຂັ້ມແຂງຂອງການຈ້າງງານໃນສ.ອາເມລິກາ ເຊັ່ນດຽວກັນກັບ ດັດຊະນີພາກບໍລິການ ຫຼື ISM ກໍ່ມີການຂະຫຍາຍຕົວເພີ່ມຂຶ້ນ ຈາກ 54,8 ໃນເດືອນ ຕຸລາ ເປັນ 57,2 ໃນເດືອນ ພະຈິກ ປະກອບກັບ ຜົນສຳຫຼວດຜູ້ຈັດການທາງການເງິນ ຫຼື CFO ຂອງພາກເອກະຊົນ ຈຳນວນ 330 ຄົນໃນ ສ.ອາເມລິກາ ແລະ 600 ຄົນທີ່ມາຈາກນອກ ສ.ອາເມລິກາ ກໍ່ມີການປັບຕົວເພີ່ມຂຶ້ນສູງສຸດໃນຮອບ 10 ກວ່າປີ ໂດຍຜົນສຳຫຼວດໄດ້ລະບຸເຖິງຄວາມພໍໃຈຕໍ່ກັບນະໂຍບາຍຜ່ອນຄາຍກົດລະບຽບ ແລະ ປັບຫຼຸດອັດຕາອາກອນລາຍໄດ້ບຸກຄົນຂອງ ທ່ານ ໂດນັ້ນທຳ ວ່າທີ່ປະທານາທິບໍດີຄົນໃໝ່ຂອງ ສ.ອາເມລິກາ ໂດຍຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ໄດ້ກາຍເປັນປັດໃຈເກື້ອໜູນ ແລະ ສ້າງຄວາມຄຶກຄັກໃຫ້ແກ່ຕະຫຼາດຫຼັກຊັບໃນ ສ.ອາເມລິກາ ອັນນຳມາເຊິ່ງການປັບຕົວເພີ່ມຂຶ້ນຢ່າງຕໍ່ເນື່ອງຂອງດັດຊະນີຕະຫຼາດຫຼັກຊັບ ແລະ ດັດຊະນີພາກການທະນາຄານໃນຕະຫຼາດຫຼັກຊັບ ສ.ອາເມລິກາ ເຊັ່ນກັນ.

**ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ** ດັດຊະນີ ຕະຫຼາດຫຼັກຊັບ ລຸກຊຳບວກ (LUXXX) ປັບຕົວເພີ່ມຂຶ້ນ 6,51%, ຝຣັ່ງ (CAC40) 3,86%, ດັດຊະນີ ຕະຫຼາດຫຼັກຊັບ ເອີຣົບ (Eurofirst 300) 1,35% ແລະ ເຢຍລະມັນ (DAX) 3,20% ຍົກເວັ້ນ ດັດຊະນີຕະຫຼາດຫຼັກຊັບ ອັງກິດ (FTSE100) ປັບຕົວຫຼຸດລົງ -1,70%. ສາເຫດທີ່ພາໃຫ້ດັດຊະນີຕະຫຼາດຫຼັກຊັບໃນເອີຣົບ ສ່ວນໃຫ່ຍປັບຕົວເພີ່ມຂຶ້ນ ແມ່ນເນື່ອງຈາກ ຜູ້ລົງທຶນຫຼຸດຜ່ອນຄວາມກັງວົນຕໍ່ກັບສະຖານະການການເມືອງພາຍໃນປະເທດ ອີຕາລີ ທີ່ຈະບໍ່ສົ່ງຜົນກະທົບອັນໃດຕໍ່ກັບເອີຣົບໃນເວລານີ້ເຊັ່ນດຽວກັບບັນຫາ Brexit ຂອງປະເທດອັງກິດ ແລະ ລາຍງານລ່າສຸດຂອງດັດຊະນີຜູ້ຈັດການຊື້ເອີຣົບ ຫຼື PMI ພາກການຜະລິດແລະບໍລິການກໍ່ປັບຕົວເພີ່ມຂຶ້ນມາຢູ່ທີ່ລະດັບ 53,9 ໃນເດືອນ ພະຈິກ ຈາກ 53,3 ໃນເດືອນ ຕຸລາ ປະກອບກັບ ການປັບຕົວເພີ່ມຂຶ້ນຢ່າງຄຶກຄັກຂອງຕະຫຼາດຫຼັກຊັບໃນ ສ.ອາເມລິກາ ກໍ່ໄດ້ຊ່ວຍໃຫ້ຕະຫຼາດຫຼັກຊັບໃນເອີຣົບມີຄວາມຄຶກຄັກ ແລະ ມີມຸມມອງບວກໃນການລົງທຶນໃນອາທິດນີ້ນຳ ລວມທັງການຄາດການຂອງຕະຫຼາດທີ່ວ່າ ທະນາຄານກາງເອີຣົບ ຫຼື ECB ຈະຂະຫຍາຍເວລາໃນການຊື້ພັນທະບັດລັດຖະບານຕາມມາດຕະການຜ່ອນຄາຍທາງປະລິມານ ຫຼື QE ໃນການປະຊຸມໃນອາທິດນີ້ ໄດ້ກາຍເປັນປັດໃຈສະນັບສະໜູນໃຫ້ດັດຊະນີຕະຫຼາດຫຼັກຊັບເອີຣົບ ສ່ວນໃຫ່ຍປັບຕົວເພີ່ມຂຶ້ນເມື່ອທຽບກັບອາທິດທີ່ຜ່ານມາ.

**ດັດຊະນີຕະຫຼາດຫຼັກຊັບໃນອາຊີ**: ດັດຊະນີ ຕະຫຼາດຫຼັກຊັບ ກຳປູເຈຍ (CSX) ປັບຕົວຫຼຸດລົງ -4,47%, ມາເລເຊຍ (FBMLCI) -2,15%, ຮົ່ອງກົງ (HANGSHENG) -2,16%, ໄຕ້ຫວັນ (TWSE) -0,22%, ອິນໂດເນເຊຍ (JCI) -2,66%, ຟີລິບປິນ (PCOMP) -11,07%, ມຽນມ້າ (MYANPIX) -1,42%, ສສ. ຫວຽດນາມ (HANOI) -7,17%, ອາຊຽນ 40 (ASEAN 40) -3,46%, ສສ. ຫວຽດນາມ (HOCHIMIN) -5%, ແລະ ສ.ເກົາຫຼີ (KOSPI) -2,40%. ຍົກເວັ້ນ ດັດຊະນີ ສປ.ຈີນ (SHANGHAI) ປັບຕົວເພີ່ມຂຶ້ນ 4,46%, ສປ.ຈີນ (SHENZHEN) 1,74%, ຍີ່ປຸ່ນ (NIKKEI225) 8,81%, ສິງກະໂປ (STRAIT TIMES) 4,05% , ໄທ (SET) 2,30% ແລະ ອົດສະຕາລີ (S&P/ASX200) 0,79%. ສາເຫດທີ່ເຮັດໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີສ່ວນໃຫ່ຍປັບຕົວຫຼຸດລົງຫຼາຍແມ່ນເນື່ອງຈາກ ຜູ້ລົງທຶນມີຄວາມກັງວົນຕໍ່ບັນຫາພາຍໃນປະເທດໃນ

ອາຊີ ແລະ ຄວາມກັງວົນຕໍ່ກັບການຄວບຄຸມລາຄານ້ຳມັນຂອງກຸ່ມ ຜູ້ສົ່ງອອກນ້ຳມັນ ປະກອບກັບ ລາຍງານຕົວເລກເສດຖະກິດຂອງບາງປະເທດໃນອາຊີ ກໍ່ມີທ່າອ່ຽງປັບຕົວຫຼຸດລົງເຊັ່ນ ມູນຄ່າການສົ່ງອອກຂອງປະເທດ ມາເລເຊຍ ປັບຕົວຫຼຸດລົງ 8,6% ເມື່ອທຽບເປັນລາຍປີ ເຊິ່ງເປັນການປັບຕົວຫຼຸດລົງເປັນເດືອນທີ 3 ໂດຍຈາກບັນດາປັດໃຈດັ່ງທີ່ກ່າວມານີ້ ໄດ້ສົ່ງຜົນໃຫ້ດັດຊະນີຕະຫຼາດຫຼັກຊັບໃນອາຊີສ່ວນໃຫຍ່ປັບຕົວຫຼຸດລົງ ເມື່ອທຽບກັບອາທິດກ່ອນ ເຖິງແມ່ນວ່າລາຍງານເສດຖະກິດຂອງ ສປ. ຈີນ ຈະສ້ອນເຖິງຄວາມເຂັ້ມແຂງຂອງເສດຖະກິດໂດຍ ດັດຊະນີຜູ້ຈັດການຊື້ PMI ພາກການຜະລິດຈະເພີ່ມຂຶ້ນຈາກ 51,2 ໃນເດືອນ ຕຸລາ ເປັນ 51,7 ໃນເດືອນ ພະຈິກ ແລະ PMI ພາກບໍລິການຈະເພີ່ມຂຶ້ນຈາກ 54 ເປັນ 54,7 ກໍ່ຕາມ.

## 2. ສະພາບການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ປິດຢູ່ທີ່ 1.014,05 ຈຸດ ຫຼຸດລົງ 1,40% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດມີປະລິມານຊື້-ຂາຍຮຸ້ນທັງໝົດ 61.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 308,45 ລ້ານກີບ ຫຼຸດລົງ 2,78% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 27,67% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.057 ກີບ ຫຼຸດລົງ 15 ກີບເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.400 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 7,08 ລ້ານກີບ ຫຼຸດລົງ 96,14% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດ ກວມເອົາ 16,13% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,40%[1].

ຮຸ້ນຂອງບໍລິສັດຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 4.996 ກີບ ຫຼຸດລົງ 86 ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 60.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 300,23 ລ້ານກີບ ເພີ່ມຂຶ້ນ 125,51% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດ ກວມເອົາ 33,56% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,39%[2].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 5.900 ກີບ ຫຼຸດລົງ 200ກີບ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ມີປະລິມານຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,61 ລ້ານກີບ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ LWPC ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,79%[3].

ຮຸ້ນຂອງບໍລິສັດ ປີໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາປິດ 2.500 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານການຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,25 ລ້ານກີບ. ໂດຍເປັນການຊື້-ຂາຍຂອງ ຜູ້ລົງທຶນຕ່າງປະເທດ ກວມເອົາ 50% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTLທັງໝົດ . ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 12,66%[4].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດ 3.000 ກີບ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ. ມີປະລິມານການຊື້-ຂາຍທັງໝົດ 100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,3 ລ້ານກີບ. ໂດຍຜູ້ລົງທຶນຕ່າງປະເທດ ບໍ່ສາມາດຈັບຄູ່ຊື້-ຂາຍໄດ້ໃນອາທິດນີ້. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,20%[5].

---

ລາຄາສະເລຍແມ່ນລາຄາທີ່ສະເລຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[1]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສາລັບຜູ້ລົງທຶນປະເພດສະຖາບັນ;

[2]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສາລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[4]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

ຮັກສາການຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ

ທ. ບຸນຈິງ ກອງຄຳ

### ຕາຕະລາງ 1: ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລຍ(ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລຍ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາສະເລຍ(ກີບ) |
| BCEL | 36.200 | 183.620.000 | 5.072 | 1.400 | 7.080.000 | 5.057 | -96,13 | -96,14 | -15 |
| EDL-GEN | 26.200 | 133.135.000 | 5.081 | 60.100 | 300.230.000 | 4.996 | 129,39 | 125,51 | -86 |
| LWPC | 0 | 0 | 6.100 | 100 | 590.000 | 5.900 | - | - | -200 |
| PTL | 200 | 500.000 | 2.500 | 100 | 250.000 | 2.500 | -50 | -50 | - |
| SVN | 0 | 0 | - | 100 | 300.000 | 3.000 | - | - | - |
| **ທັງໝົດ** | 62.600 | 317.255.000 | 0 | **61.800** | **308,450,000** | | -1,28 | -2,78 | |

### ແຜນວາດ 1: ດັດຊະນີຕະຫຼາດຫຼັກຊັບລາວ

### (11 ມັງກອນ 2011 – 8 ທັນວາ 2016)




### ແຜນວາດ 2: ມູນຄ່າການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບລາວ

### ( 24 – 8 ທັນວາ 2016)

ຫົວໜ່ວຍ: ລ້ານ ກີບ



ຕາຕະລາງ 2: ດັດຊະນີຕະຫຼາດຫຼັກຊັບຕ່າງປະເທດ

| ຊື່ດັດຊະນີ | ປະເທດ | ດັດຊະນີໃນອາທິດນີ້ | ດັດຊະນີໃນອາທິດກ່ອນ | ປ່ຽນແປງ | |
|---|---|---|---|---|---|
| | | | | +/- | % |
| I. ສະຫະລັດ | | | | | |
| DOW | ສ.ອາເມລິກາ | 19.549,62 | 18.202,62 | 1.347 | 7,40 |
| NASDAQ | ສ.ອາເມລິກາ | 5.393,76 | 5.246,41 | 147,35 | 2,81 |
| S&P500 | ສ.ອາເມລິກາ | 2.241,35 | 2.144,29 | 97,06 | 4,53 |
| II. ຕະຫຼາດຫຼັກຊັບເອີຣົບ | | | | | |
| Eurofirst 300 | ເອີຣົບ | 1.373,63 | 1.355,32 | 18,31 | 1,35 |
| DAX | ເຢຍລະມັນ | 10.986,69 | 10.645,68 | 341,01 | 3,20 |
| FTSE100 | ອັງກິດ | 6.902,23 | 7.021,92 | (119,69) | (1,70) |
| CAC40 | ຝຣັ່ງ | 4.694,72 | 4.520,30 | 174,42 | 3,86 |
| LUXXX | ລຸກຊໍາບວກ | 1.686,09 | 1.582,99 | 103,10 | 6,51 |
| III. ຕະຫຼາດຫຼັກຊັບອາຊີ | | | | | |
| NIKKEI225 | ຍີ່ປຸ່ນ | 18.496,69 | 16.998,91 | 1.497,78 | 8,81 |
| KOSPI | ສ.ເກົາຫຼີ | 1.991,89 | 2.040,94 | (49,05) | (2,40) |
| HANGSHENG | ຮ່ອງກົງ | 22.800,92 | 23.304,97 | (504,05) | (2,16) |
| TWSE | ໄຕ້ຫວັນ | 9.263,89 | 9.283,99 | (20,10) | (0,22) |
| SHANGHAI | ສປ. ຈີນ | 3.222,24 | 3.084,72 | 137,52 | 4,46 |
| SHENZHEN | ສປ. ຈີນ | 2.090,33 | 2.054,63 | 35,70 | 1,74 |
| S&P/ASX200 | ອົດສະຕາລີ | 5.478,10 | 5.435,40 | 42,70 | 0,79 |
| IV. ຕະຫຼາດຫຼັກຊັບອາຊຽນ | | | | | |
| ASEAN40 | ອາຊີ | 8.968,79 | 9.290,02 | (321,23) | (3,46) |
| STRAIT TIME | ສິງກະໂປ | 2.959,84 | 2.844,62 | 115,22 | 4,05 |
| SET | ໄທ | 1.520,53 | 1.486,28 | 34,25 | 2,30 |
| FBMLCI | ມາເລເຊຍ | 1.632,47 | 1.668,27 | (35,80) | (2,15) |
| JCI | ອິນໂດເນເຊຍ | 5.265,37 | 5.409,29 | (143,92) | (2,66) |
| PCOMP | ຟີລິບປິນ | 6.866,81 | 7.721,57 | (854,76) | (11,07) |
| HOCHIMIN | ສສ. ຫວຽດນາມ | 653,11 | 687,51 | (34,40) | (5,00) |
| HANOI | ສສ. ຫວຽດນາມ | 79,41 | 85,54 | (6,13) | (7,17) |
| CSX | ກໍາປູເຈຍ | 313,79 | 328,48 | (14,69) | (4,47) |
| LSX | ສປປ. ລາວ | 1.028,48 | 998,73 | 29,75 | 2,98 |
| MYANPIX | ມຽນມ້າ | 627,42 | 636,45 | (9,03) | (1,42) |
| V. ດັດຊະນີກຸ່ມທະນາຄານ | | | | | |
| NASDAQ BANK | ສ. ອາເມລິກາ | 3.772,18 | 3.019,02 | 753,16 | 24,95 |
| SET BANK | ໄທ | 482,16 | 477,31 | 4,85 | 1,02 |